ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

VIENTIANE CENTER
ວຽງຈັນເຊັນເຕີ

ເລກທີ/.0..1..4.:ວຈຊຕ
ນະຄອນຫຼວງວຽງຈັນ, ວັນທີ: 0..2...APR..2024

ຮຽນ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຄັ້ງທີ 2 ປະຈຳປີ 2024

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມວິສາມັນ ສະພາບໍລິຫານ ຄັ້ງທີ 2 ປະຈຳປີ 2024 ໃນ ວັນທີ 01 ເມສາ 2024, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

<u>ມະຕິ 01:</u> ເຫັນດີການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ແລະຈະລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອຮັບຊາບ.

<u>ມະຕິ 02:</u> ເຫັນດີຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ແລະຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 03:</u> ເຫັນດີຮັບຮອງບົດລາຍງານການເງິນປະຈຳປີ 2023 ຂອງ ວຈຊຕ ແລະຈະ ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 04:</u> ເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2023 ແລະ ແຜນການດຳເນີນທຸລະກິດ 2024 ຂອງ ວຈຊຕ ແລະຈະ ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

<u>ມະຕິ 05:</u> ເຫັນດີຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2023 ແລະຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ ໂດຍມີລາຍລະອຽດຄືດັ່ງລຸ່ມນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;

2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;

3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;

4. ກຳນົດເອົາວັນທີ 25/04/2024 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 28/05/2024;

5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

ມະຕິ 06: ເຫັນດີຮັບຮອງການວ່າຈ້າງ ບໍລິສັດ ພຣາຍສວໍເຕີ້ ເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ ເປັນບໍລິສັດ ກວດສອບບັນຊີປະຈຳປີ 2024 ຂອງບໍລິສັດ ໂດຍມີຄ່າບໍລິການກວດສອບເປັນຈຳນວນເງິນ 27.000 ໂດລາ ແລະຈະ ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

ມະຕິ 07: ເຫັນດີຮັບຮອງການເລືອກຕັ້ງ ສະມາຊິກສະພາບໍລິຫານ ສະໄໝທີ 4 ຂອງ ວຈຊຕ ແລະຈະສະເໜີຕໍ່ ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

ມະຕິ 08: ເຫັນດີຮັບຮອງການເລືອກຕັ້ງ ຄະນະກຳມະການຕ່າງໆຂອງ ວຈຊຕ ແລະຈະສະເໜີຕໍ່ກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ ເພື່ອພິຈາລະນາ ແລະ ຮັບຮອງ.

ມະຕິ 09: ເຫັນດີຮັບຮອງວາລະທີ່ຈະສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ຂອງ ວຈຊຕ ເພື່ອພິຈາ ລະນາ ແລະ ຮັບຮອງ ຄືດັ່ງລຸ່ມນີ້:

ວາລະທີ່ 01: ຮັບຊາບການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

ວາລະທີ່ 02: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

ວາລະທີ່ 03: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນປະຈຳປີ 2023 ຂອງ ວຈຊຕ.

ວາລະທີ່ 04: ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2023 ແລະ ແຜນການ ດຳເນີນທຸລະກິດ 2024 ຂອງ ວຈຊຕ.

ວາລະທີ່ 05: ພິຈາລະນາ ແລະ ຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2023.

ວາລະທີ່ 06: ພິຈາລະນາ ແລະ ຮັບຮອງການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະຂອງບໍລິສັດ ວຈຊຕ..

ວາລະທີ່ 07: ພິຈາລະນາ ແລະ ຮັບຮອງການເລືອກຕັ້ງ ສະມາຊິກສະພາບໍລິຫານ ສະໄໝທີ 4 ຂອງ ວຈຊຕ.

ວາລະທີ່ 08: ພິຈາລະນາ ແລະ ຮັບຮອງການເລືອກຕັ້ງ ຄະນະກຳມະການຕ່າງໆຂອງ ວຈຊຕ.

ອາລະທີ່ 09: (ຖ້າມີ)

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

He Jun